3/3/2026

# ນະໂຍບາຍ ສະເພາະ

ລາວ ໂຄຄາ-ໂຄລາ

ເອກະສານ ເລກທີ: HR.SD.01.017.L
ມີຜົນບັງຄັບໃຊ້ ວັນທີ: 03/03/2026

**ກ່ຽວກັບນະໂຍບາຍ**

**ບໍລິສັດ ລາວ ໂຄຄາ-ໂຄລາ ບອັຕຕລິງ ຈຳກັດ ("ລາວ ໂຄຄາ-ໂຄລາ")** ມີຄວາມມຸ້ງໝັ້ນຕະຫລອດມາທີ່ຈະປະກອບ ທຸລະກິດພາຍໃຕ້ຫຼັກທຳມາພິບານທີ່ດີ ດ້ວຍຄວາມຮັບຜິດຊອບຕໍ່ສັງຄົມ ລາວ ໂຄຄາ-ໂຄລາໃຫ້ຄວາມສຳຄັນກັບການຄຸ້ມຄອງຂໍ້ມູນສ່ວນ ບຸກຄົນ ການລ່ວງລະເມີດສິດທິໃນຂໍ້ມູນສ່ວນບຸກຄົນການຄວບຄຸມການໃຊ້ຂໍ້ມູນ ແລະປ້ອງກັນການຮົ່ວໄຫຼຂອງຂໍ້ມູນສ່ວນບຸກຄົນ;

ນະໂຍບາຍສະບັບນີ້ສ້າງຂຶ້ນໂດຍມີວັດຖຸປະສົງເພື່ອຖືຮັກສາຄວາມໄວ້ວາງໃຈ ແລະຄວາມເຊື່ອໝັ້ນໃນການຈັດການຂໍ້ມູນ ສ່ວນຕົວຂອງເຈົ້າຂອງຂໍ້ມູນວ່າ ລາວ ໂຄຄາ-ໂຄລາຈະດຳເນີນການຢ່າງເໝາະສົມ ແລະມີມາດຕະການຮັກສາຄວາມປອດໄພຂໍ້ມູນສ່ວນບຸກຄົນຕາມທີ່ກົດໝາຍກຳນົດທຽບເທົ່າມາດຕະຖານສາກົນ;

ທັງນີ້ ນະໂຍບາຍສະບັບນີ້ໃຊ້ກັບກໍລະນີທີ່ລາວ ໂຄຄາ-ໂຄລາຢູ່ໃນຖານະຜູ້ຄວບຄຸມຂໍ້ມູນເທົ່ານັ້ນ ໃນກໍລະນີທີ່ລາວ ໂຄຄາ-ໂຄລາປະມວນຜົນຂໍ້ມູນສ່ວນບຸກຄົນໃນກິດຈະກຳໃດໃນຖານະຂອງຜູ້ປະມວນຜົນຂໍ້ມູນໃຫ້ເຈົ້າຂອງຂໍ້ມູນກວດສອບລາຍລະອຽດການ ປະມວນຜົນໄດ້ຈາກນະໂຍບາຍຄຸ້ມຄອງຂໍ້ມູນສ່ວນບຸກຄົນ ຫລືໜັງສືແຈ້ງການປະມວນຜົນຂໍ້ມູນສ່ວນບຸກຄົນຂອງບໍລິສັດຫລື ໜ່ວຍງານ ຊຶ່ງເປັນຜູ້ຄວບຄຸມຂໍ້ມູນໃນກິດຈະກຳນັ້ນໆໂດຍກົງ;

ນອກເໜືອຈາກນະໂຍບາຍສະບັບນີ້ ລາວ ໂຄຄາ-ໂຄລາໄດ້ຈັດທຳນະໂຍບາຍຄຸ້ມຄອງຂໍ້ມູນສ່ວນບຸກຄົນສຳລັບໃຊ້ກັບບຸກຄະລາກອນ, ຄູ່ຄ້າ ແລະ ພັນທະມິດທາງທຸລະກິດ ຊຶ່ງມີສ່ວນຮ່ວມໃນການການຮ່ວມງານຫລື ປະຕິບັດງານໃຫ້ກັບລາວ ໂຄຄາ-ໂຄລາ ເພື່ອກຳນົດ ກົດເກນການປະມວນຜົນຂໍ້ມູນສ່ວນບຸກຄົນທີ່ຢູ່ໃນຄວາມຄອບຄອງເຄືອບໍລິສັດລາວ ໂຄຄາ-ໂຄລາ, ຄູ່ຄ້າ ແລະ ພັນທະມິດທາງ ທຸລະກິດ;

**ການເກັບລວບລວມຂໍ້ມູນສ່ວນບຸກຄົນຂອງເຈົ້າຂອງຂໍ້ມູນ**

ລາວ ໂຄຄາ-ໂຄລາອາດເກັບລວບລວມຂໍ້ມູນສ່ວນບຸກຄົນຂອງເຈົ້າຂອງຂໍ້ມູນ ທັງໂດຍທາງກົງແລະທາງອ້ອມຈາກແຫຼ່ງທີ່ມາດັ່ງລຸ່ມນີ້:

- ຂໍ້ມູນທີ່ເຈົ້າຂອງຂໍ້ມູນ ຫລື ຕົວແທນຂອງເຈົ້າຂອງຂໍ້ມູນໃຫ້ໄວ້ກັບລາວ ໂຄຄາ-ໂຄລາຫລື ຜູ້ມີສ່ວນກ່ຽວຂ້ອງກັບ ເຈົ້າຂອງຂໍ້ມູນ;
- ຫ້ອງການຂາຍຂອງ ລາວໂຄຄາ-ໂຄລາ
- ພັນທະມິດທາງທຸລະກິດຂອງລາວ ໂຄຄາ-ໂຄລາ ເຊັ່ນ ບໍລິສັດ ໂຄຄາ-ໂຄລ່າ (ປະເທດໄທ) ຫລື ບໍລິສັດໃນກຸ່ມ ຜະລິດຕະພັນ ໂຄຄາ-ໂຄລ່າ ອື່ນໆ ຫລື ສໄວຣ ໂຄຄາ-ໂຄລາ ຫລື ບໍລິສັດໃນກຸ່ມ;
- ຜູ້ໃຫ້ບໍລິການພາຍນອກຂອງລາວ ໂຄຄາ-ໂຄລາ ເຊັ່ນ: ຜູ້ໃຫ້ບໍລິການທາງໂທລະສັບ (Call

Center) ບໍລິສັດຜູ້ຈັດຫາງານ ຜູ້ຈັດກິດຈະກຳສົ່ງເສີມການຂາຍ ຜູ້ໃຫ້ບໍລິການຂໍ້ມູນຄູ່ຄ້າ ຫລື ຕົວແທນຕິດຕໍ່ສື່ມວນຊົນ;

- ບໍລິການຜ່ານຊ່ອງທາງຕ່າງໆ ຂອງ ລາວ ໂຄຄາ-ໂຄລາ ທັງຫມົດເຖິງ ບໍລິການທາງໂທລະສັບ (Call Center) ອີເມລ;
- ບໍລິການທາງດ້ານດິຈິທັນຕ່າງໆ ຂອງ ລາວ ໂຄຄາ-ໂຄລາ ທັງຫມົດລວມເຖິງການໃຊ້ງານເວັບໄຊ ຕ໌ແອບພລິເຄຊັ່ນ ຫລື ສື່ສັງຄົມ ອອນໄລປະເພດອື່ນໆ;
- ແຫຼ່ງຂໍ້ມູນອື່ນໆທີ່ເຊື່ອຖືໄດ້ ເຊັ່ນ ອົງກອນຂອງລັດ, ຫນ່ວຍງານພາພາກລັດ ອົງກອນເອກະຊົນ ສະມາຄົມ ຫລື ມູນນິທິ;
- ງານສຳມະນາ, ງານຝຶກອົບຮົມ, ການອອກຮ້ານ ໂດຍທີ່ ລາວ ໂຄຄາ-ໂຄລາ ຈັດຂຶ້ນເອງ ຫລື ຈັດ ໂດຍອົງກອນພາກລັດ ແລະ ພາກເອກຊົນອື່ນໆ;
- ການຈັດກິດຈະກຳຕ່າງ ໆ ເຊັ່ນ ກິດຈະກຳຊິງຮາງວັນ ທຶນການສຶກສາ ແລະງານຊ່ວຍເຫລືອ ສັງຄົມຕ່າງ ໆ

**ປະເພດຂອງຂໍ້ມູນສ່ວນບຸກຄົນທີ່ລາວ ໂຄຄາ-ໂຄລາ ຈັດເກັບ**

ລາວ ໂຄຄາ-ໂຄລາ ອາດຈັດເກັບຂໍ້ມູນທີ່ມີຄວາມຫຼາກຫຼາຍ ໂດຍພິຈາລະນາຈາກວັດຖຸປະສົງຂອງການນຳໄປໃຊ້ ແລະ ການປະຕິບັດຫນ້າທີ່ຂອງຜູ້ປະຕິບັດງານ ຊຶ່ງຂໍ້ມູນທີ່ຈັດເກັບນັ້ນໄດ້ລວມໄປເຖິງ:

- ຂໍ້ມູນທີ່ສາມາດລະບຸຕົວຕົນໄດ້ ເຊັ່ນ: ວັນເດືອນປີເກີດ ລາຍລະອຽດໃນບັດປະຊາຊົນ ຫລື ຫນັງສືເດີນທາງ ຫລື ໃບອະນຸຍາດຂັບຂີ່ພາຫະນະ;
- ຂໍ້ມູນການຕິດຕໍ່ ເຊັ່ນ: ຊື່ ທີ່ຢູ່ ໝາຍເລກໂທລະສັບ ອີເມລ ແລະ ໂທລະສານ
- ຂໍ້ມູນທົ່ວໄປ ເຊັ່ນ: ອາຍຸ ເພດ ສະຖານພາບສົມລົດ ແລະ ອາຊີບ
- ຂໍ້ມູນທາງການເງິນ ເຊັ່ນ: ບັນຊີທະນາຄານ ຂໍ້ມູນການເສຍພາສີ
- ຂໍ້ມູນກ່ຽວກັບຄວາມເພິ່ງພໍໃຈໃນຜະລິດຕະພັນ ແລະ ບໍລິການຂອງລາວ ໂຄຄາ-ໂຄລາ
- ຂໍ້ມູນບັນຊີສື່ສັງຄົມອອນໄລນ໌ ເຊັ່ນ LINE FACEBOOK ເຊິ່ງລວມໄປເຖິງພຶດຕິກຳ ການ ສະແດງຄວາມຄິດເຫັນ ຫລື ກິດຈະກຳທີ່ທ່ານສື່ສານກັບລາວ ໂຄຄາ-ໂຄລາ ຜ່ານສື່ສັງຄົມອອນ ໄລນ໌ດັ່ງກ່າວ;

- ຂໍ້ມູນຜ່ານພາຫະນະ ເຊັ່ນ: ທະບຽນລົດ ແລະ ທະບຽນລົດຈັກ ຍານພາຫະນະເປັນຕົ້ນ
- ຂໍ້ມູນກ່ຽວກັບອຸປະກອນຄອມພິວເຕີ ແລະໂປຣແກຣມທີ່ເຈົ້າຂອງຂໍ້ມູນໃຊ້ເພື່ອເຂົ້າໃຊ້ງານຕ່າງ ໆ ລວມໄປເຖິງ ເລກທີ່ ຢູ່ໄອພີ ປະເພດຂອງບຣາວເຊີພາສາ ລະບົບປະຕິບັດການ ແອບພລິກເຄຊັນ ແລະປະຫວັດການໃຊ້ງານເວັບໄຊຕ໌ຕ່າງ ໆ ແລະ ຂໍ້ມູນກ່ຽວກັບ Cookies;
- ຂໍ້ມູນຊີວະພາບ ເຊັ່ນ: ລາຍພິມນິ້ວມື
- ຮູບພາບ ແລະ ຮູບພາບເຄື່ອນໄຫວ ລວມເຖິງ ການບັນທຶກພາບໃນລະບົບກ້ອງວົງຈອນປິດ
- ບັນທຶກສຽງສົນທະນາທາງໂທລະສັບ ເຊິ່ງລວມໄປເຖິງ ຂໍ້ຄຳນິຕິຊົມ ຫລື ຂໍ້ຮ້ອງຮຽນຂອງທ່ານ ຫລື ກິດຈະກຳໃດໆ ທີ່ທ່ານ ສື່ສານກັບລາວ ໂຄຄາ-ໂຄລາ ຜ່ານທາງໂທລະສັບ
- ປະຫວັດທາງການແພດ ຫລື ຜົນການກວດສຸກຂະພາບ;

## ໄລຍະເວລາໃນການຈັດເກັບ

ລາວ ໂຄຄາ-ໂຄລາ ຈະເກັບຖືຮັກສາຂໍ້ມູນສ່ວນບຸກຄົນຂອງເຈົ້າຂອງຂໍ້ມູນໄວ້ເປັນໄລຍະເວລາ ຈົນກວ່າເທົ່າທີ່ວັດຖຸປະສົງຂອງການ ນຳຂໍ້ມູນດັ່ງກ່າວຍັງຄົງນຳໃຊ້ໄດ້ຢູ່ ຫຼັງຈາກນັ້ນ ລາວ ໂຄຄາ-ໂຄລາ ຈະລົບ ແລະທຳລາຍຂໍ້ມູນດັ່ງກ່າວ ເວັ້ນແຕ່ກໍລະນີຈຳເປັນຕ້ອງເກັບຮັກສາຂໍ້ມູນຕໍ່ໄປຕາມທີ່ກົດໝາຍທີ່ກ່ຽວຂ້ອງກຳໜົດໃຫ້ ຫລື ເພື່ອເປັນການຄຸ້ມຄອງສິດທິປະໂຫຍດຂອງລາວ ໂຄຄາ-ໂຄລາ ໂດຍປົກກະຕິ ໃນກໍລະນີທົ່ວໄປ ໄລຍະເວລາການເກັບຂໍ້ມູນສູງສຸດຈະເທົ່າກັບ 10 ປີ ເວັ້ນແຕ່ຈະມີກົດໝາຍກຳໜົດໃຫ້ເກັບຖືຮັກສາຂໍ້ມູນໄວ້ເປັນ ໄລຍະເວລາດົນກວ່າທີ່ກຳໜົດໄວ້ດັ່ງກ່າວ;

## ວັດຖຸປະສົງຂອງການໃຊ້ແລະການເປີດເຜີຍຂໍ້ມູນສ່ວນບຸກຄົນ

ລາວໂຄຄາ-ໂຄລາຈະໃຊ້ແລະເປີດເຜີຍຂໍ້ມູນສ່ວນບຸກຄົນກໍລະນີດັ່ງລຸ່ມນີ້:

- ເພື່ອການລົງທະບຽນເຂົ້າເປັນລູກຄ້າ ຫລື ຕົວແທນໃນການເຂົ້າເຮັດທຸລະກິດຊຶ່ງກ່ຽວກັບການຈຳໜ່າຍສິນຄ້າ ຫລື ຜະລິດຕະພັນຂອງລາວໂຄຄາ-ໂຄລາ,
- ເພື່ອຈັດການ ຢືນຢັນ ແລະ ດຳເນີນການກ່ຽວກັບການຮັບຄຳສັ່ງຊື້ສິນຄ້າຫລືການໃຫ້ບໍລິການຕ່າງໆ ທີ່ດຳເນີນການໂດຍ ລາວ ໂຄຄາ-ໂຄລາ

- ເພື່ອສະໜັບສະໜູນການໃຫ້ບໍລິການຂອງໄຫມ ່າທິພຍ໌ ເຊັ່ນ ການໃຫ້ເຄຣດິດວງເງິນ ການໃຫ້ບໍລິການສະໜັບສະໜູນອຸປະກອນຕູ້ ແຊ່ເຢັນ ເປັນຕົ້ນ
- ເພື່ອປະຕິບັດໜ້າທີ່ຕາມສັນຍາບໍ່ວ່າຈະເປັນການປະຕິບັດຫນ້າທີ່ໂດຍທາງກົງຫລືໂດຍທາງອ້ອມ
- ເພື່ອການປະກອບທຸລະກິດທີ່ ລາວ ໂຄຄາ-ໂຄລາ ມີຄວາມຈຳເປັນເພື່ອປະໂຫຍດໂດຍຊອບທຳດ້ວຍກົດຫມາຍ (Legitimate Interest) ໂດຍຄຳນຶງເຖິງ ສິດທິຂັ້ນພື້ນຖານຂອງເຈົ້າຂອງຂໍ້ມູນ.
- ເພື່ອການປັບປຸງ ພັດທະນາ ແລະ ເພື່ອຄົງໄວ້ຊຶ່ງຄຸນນະພາບຂອງຜະລິດຕະພັນແລະບໍລິການຂອງ ລາວ ໂຄຄາ-ໂຄລາ;
- ເພື່ອສອບຖາມຄວາມເພິງພໍໃຈໃນຄຸນນະພາບຂອງຜະລິດຕະພັນແລະບໍລິການຂອງລາວ ໂຄຄາ-ໂຄລາ ລວມໄປເຖິງການຮັບເລື່ອງ ຮ້ອງຮຽນຕ່າງໆ ກ່ຽວກັບຜະລິດຕະພັນ ແລະບໍລິການຂອງລາວ ໂຄຄາ-ໂຄລາ ແລະດຳເນີນການແກ້ໄຂ ຫລື ທົດແທນຄວາມເສຍຫາຍທີ່ເກີດຂຶ້ນ;
- ເພື່ອການຕິດຕໍ່ສື່ສານ ເຊັ່ນ: ການສົ່ງບໍລິການແຈ້ງເຕືອນການ ການຕອບກັບເມື່ອໄດ້ຮັບການຕິດຕໍ່ຈາກເຈົ້າຂອງ ຂໍ້ມູນ;
- ເພື່ອນຳສະເໜີຜະລິດຕະພັນ ແລະ ບໍລິການອື່ນໆ ຜ່ານຊ່ອງທາງຕ່າງໆ ເຊັ່ນ ໂທລະສັບ (tele-sale) ຫລື ສື່ສັງຄົມອອນໄລນ໌ (SOCIAL MEDIA) ໃນກໍລະນີທີ່ເຈົ້າຂອງຂໍ້ມູນບໍ່ປະສົງຈະໄດ້ຮັບການຕິດຕໍ່ກ່ຽວກັບກິດຈະກຳທາງການຕະຫລາດ ຫລື ກິດຈະກຳການຂາຍ ເຈົ້າຂອງຂໍ້ມູນສາມາດແຈ້ງຄວາມຕ້ອງການ ຜ່ານຊ່ອງທາງທີ່ ລາວ ໂຄຄາ-ໂຄລາ ກຳໜົດໄວ້ ເຊັ່ນ: ອີເມນ ເວັບໄຊຕ໌ ຫລື ບຸກຄະລາກອນຂອງລາວ ໂຄຄາ-ໂຄລາທີ່ຕິດຕໍ່ເຈົ້າຂອງຂໍ້ມູນ;
- ເພື່ອສະໜັບສະໜູນມາດຕະການ ດ້ານຄວາມຫມັ້ນຄົງ ແລະ ຄວາມປອດໄພຂອງ ລາວ ໂຄຄາ-ໂຄລາ;
- ເພື່ອໃຫ້ໝັ້ນໃຈວ່າເນື້ອຫາຈາກເວັບໄຊຂອງ ລາວ ໂຄຄາ-ໂຄລາ ຈະຖືກນຳສະເໜີຕໍ່ເຈົ້າຂອງຂໍ້ມູນ ແລະ ສະແດງຜົນເທິງອຸປະກອນທາງອີເລັກໂທນິກໃຫ້ກັບເຈົ້າຂອງຂໍ້ມູນຢ່າງມີປະສິດທິພາບ;
- ເພື່ອລະບຸຕົວຕົນຂອງຜູ້ມາຕິດຕໍ່ ການເຂົ້າອາຄານສຳນັກງານ ຕາມມາດຕະການດ້ານການຮັກສາຄວາມປອດໄພ;
- ເພື່ອດຳການຈ່າຍ ແລະ ຮັບເງິນ;
- ເພື່ອປະເມີນ ແລະ ຈັດການຄຳຮ້ອງຂໍ
- ເພື່ອປ້ອງກັນແລະກວດສອບການປລອມແປລງ

- ເພື່ອການວິໄຈຕະຫລາດ ແລະ ການວິໄຈເພື່ອພັດທະນາຜະລິດຕະພັນແລະບໍລິການຂອງລາວ ໂຄຄາ-ໂຄລາ
- ເພື່ອວັດຖຸປະສົງໃນການກວດສອບຕ່າງໆ ລວມໄປເຖິງດຳເນີນການຕາມຄຳຂໍຂອງຫນ່ວຍງານກຳກັບເບິ່ງແຍງຕ່າງໆ;
- ເພື່ອປະຕິບັດຕາມກົດຫມາຍຕ່າງ ໆ ທີ່ກ່ຽວຂ້ອງ
- ເພື່ອເຊີນເຂົ້າຮ່ວມອົບຮົມ ສຳມະນາງານຕ້ອນຮັບ ຫລື ກິດຈະກຳອື່ນໆ ທັງທີ່ ລາວ ໂຄຄາ-ໂຄລາ ເປັນຜູ້ຈັດງານ ຫລື ການເຂົ້າຮ່ວມງານດັ່ງກ່າວ ທີ່ຫນ່ວຍງານຫລືອົງກອນພາກລັດ ແລະ ພາກເອກະຊົນຈັດຂຶ້ນ;
- ເພື່ອປະເມີນຜົນຜູ້ເຂົ້າຮ່ວມສຳມະນາ ການຝຶກອົບຮົມ ລວມເຖິງກິດຈະກຳຫລື ງານຊ່ວຍເຫລືອສັງຄົມຕ່າງໆ ຂອງ ລາວ ໂຄຄາ-ໂຄລາ ລວມເຖິງການຈັດທຳລາຍງານສະຫລຸບຜົນທີ່ກ່ຽວຂ້ອງ;
- ເພື່ອຈັດກິດຈະກຳສົ່ງເສີມການຂາຍຕ່າງ ໆ ເຊັ່ນ: ການຊິງລາງວັນ ການສະສົມຄະແນນແລກຂອງລາງວັນ ການເຂົ້າຮ່ວມ ໂປຣແກຣມສົ່ງເສີມການຂາຍຜ່ານສື່ສັງຄົມອອນໄລນ໌ ລວມໄປເຖິງການຈັດສົ່ງຂອງຮາງວັນ ເປັນຕົ້ນ;
- ເພື່ອການປະຊາສຳພັນຂ່າວສານຂອງ ລາວ ໂຄຄາ-ໂຄລາ ແລະ ເພື່ອການຈັດທຳສື່ໂຄສະນາຂອງລາວ ໂຄຄາ-ໂຄລາ ຜ່ານຊ່ອງທາງຕ່າງໆ ເຊັ່ນ: ສິ່ງພິມ ໂທຣລະພາບ ສື່ສັງຄົມອອນໄລນ໌ ເປັນຕົ້ນ;
- ເພື່ອໃຫ້ການຊ່ວຍເຫລືອ ຫລື ດຳເນີນການທົດແທນຄວາມເສຍຫາຍ ທີ່ອາດເກີດຂຶ້ນກັບເຈົ້າຂອງຂໍ້ມູນຈາກການ ປະຕິບັດງານຂອງລາວ ໂຄຄາ-ໂຄລາ
- ເພື່ອກວດສອບການເຂົ້າມາປະຕິບັດງານໃນພື້ນທີ່ຂອງລາວ ໂຄຄາ-ໂຄລາ໌
- ເພື່ອດຳເນີນການຕາມຄວາມຈຳເປັນໃຫ້ບັນລຸວັດຖຸປະສົງຂອງການລະດົມທຶນໃນຕະຫລາດຫຼັກຊັບຄວບທັງຫມົດ ກິດຈະການ ປັບປຸງໂຄງສ້າງອົງກອນ ຮ່ວມທຶນ ຊື້-ຂາຍ ໂອນ ຫລືຈັດການ ທຸລະກິດທັງໝົດ ຫລື ບາງສ່ວນຂອງລາວ ໂຄຄາ-ໂຄລາ

ລາວ ໂຄຄາ-ໂຄລາ ຈະປະມວນຜົນຂໍ້ມູນສ່ວນບຸກຄົນ ໂດຍປະຕິບັດຕາມກົດຫມາຍທີ່ກ່ຽວຂ້ອງຢ່າງເຄັ່ງຄັດ ແລະໃນກໍລະນີທີ່ ລາວ ໂຄຄາ-ໂຄລາ ໄດ້ຮັບການຍິນຍອມຈາກເຈົ້າຂອງຂໍ້ມູນ ເຈົ້າຂອງຂໍ້ມູນສາມາດເພີກຖອນການຍິນຍອມໄດ້ຕະຫລອດເວລາ;

**ຜູ້ທີ່ໄດ້ຮັບການເປີດເຜຍຂໍ້ມູນສ່ວນບຸກຄົນຈາກລາວ ໂຄຄາ-ໂຄລາ**

ລາວ ໂຄຄາ-ໂຄລາ ຈະບໍ່ເປີດເຜີຍຂໍ້ມູນສ່ວນບຸກຄົນຂອງເຈົ້າຂອງຂໍ້ມູນ ໂດຍບໍ່ມີຖານການປະມວນຜົນຂໍ້ມູນໂດຍຊອບທຳທາງກົດຫມາຍ ໂດຍຂໍ້ມູນຂອງເຈົ້າຂອງຂໍ້ມູນ ອາດເປີດເຜີຍ ຫລືໂອນໄປຍັງອົງກອນ ຫນ່ວຍງານຂອງລັດ ຫລື ບຸກຄົນພາຍນອກ ທີ່ກ່ຽວຂ້ອງເຊັ່ນ:

- ບໍລິສັດອື່ນນອກເໜືອຈາກບໍລິສັດຍ່ອຍຂອງລາວ ໂຄຄາ-ໂຄລາ
- ພັນທະມິດທາງທຸລະກິດໃນກຸ່ມທຸລະກິດໂຄຄາ-ໂຄລ່າ ທັງໃນປະເທດແລະຕ່າງປະເທດ
- ພັນທະມິດທາງທຸລະກິດອື່ນໆ ເຊັ່ນ: ຕົວແທນຈຳໜ່າຍ ຮ້ານຄ້າ ຮ້ານອາຫານ ເປັນຕົ້ນ
- ຜູ້ໃຫ້ບໍລິການພາຍນອກ ເຊັ່ນ: ຜູ້ໃຫ້ບໍລິການຄລາວດ໌ ຜູ້ໃຫ້ບໍລິການຈັດທຳຊອບແວຣ໌ ຜູ້ໃຫ້ບໍລິການດ້ານຄວາມປອດໄພ ຜູ້ໃຫ້ບໍລິການດ້ານການວິເຄາະຄວາມພຶງພໍໃຈໃນຜະລິດຕະພັນຂອງລາວ ໂຄຄາ-ໂຄລາ ຜູ້ໃຫ້ບໍລິການຈັດກິດຈະກຳສົ່ງເສີມ ການຂາຍ ຜູ້ໃຫ້ບໍລິການຂົນສົ່ງສິນຄ້າ ແລະລາງວັນ ເປັນຕົ້ນ;
- ທີ່ປຶກສາ ເຊັ່ນ: ທີ່ປຶກສາທາງການເງິນ ຫລື ທີ່ປຶກສາກົດຫມາຍ
- ຫນ່ວຍງານພາກລັດ ແລະ ຫນ່ວຍງານກຳກັບເບິ່ງແຍງ
- ບໍລິສັດປະກັນໄພໃນກໍລະນີອຸບັດເຫດເທິງທ້ອງຖະໜົນຊຶ່ງລາວ ໂຄຄາ-ໂຄລາ ເປັນຄູ່ກໍລະນີ
- ຜູ້ຄວບຄຸມຂໍ້ມູນອື່ນທີ່ເຈົ້າຂອງຂໍ້ມູນໃຫ້ສົ່ງຫລືໂອນຂໍ້ມູນໄປໃຫ້
- ນັກລົງທຶນ ຫລື ຜູ້ທີ່ສົນໃຈລົງທຶນໃນກິດຈະການຂອງລາວ ໂຄຄາ-ໂຄລາ

ໃນກໍລະນີທີ່ລາວ ໂຄຄາ-ໂຄລາ ຈຳເປັນຕ້ອງສົ່ງຂໍ້ມູນສ່ວນບຸກຄົນຂອງເຈົ້າຂອງຂໍ້ມູນໃຫ້ແກ່ບຸກຄົນພາຍນອກ ລາວ ໂຄຄາ-ໂຄລາ ຈະດຳເນີນການຕາມຂັ້ນຕອນທີ່ເໝາະສົມ ເພື່ອໃຫ້ໝັ້ນໃຈວ່າບຸກຄົນພາຍນອກຈະເບິ່ງແຍງຂໍ້ມູນສ່ວນບຸກຄົນຂອງເຈົ້າຂອງຂໍ້ມູນບໍ່ໃຫ້ເກີດ ການສູນຫາຍ ການເຂົ້າເຖິງຂໍ້ມູນໂດຍບໍ່ໄດ້ຮັບອະນຸຍາດ ການໃຊ້ ການດັດແປງ ຫລືການເປີດເຜີຍແລະການໃຊ້ງານທີ່ບໍ່ຖືກຕ້ອງ

**ການເປີດເຜີຍຂໍ້ມູນສ່ວນບຸກຄົນຂອງເຈົ້າຂອງຂໍ້ມູນຕໍ່ຜູ້ຮັບຂໍ້ມູນໃນຕ່າງປະເທດ**

ລາວ ໂຄຄາ-ໂຄລາຈະດຳເນີນການເປີດເຜີຍຂໍ້ມູນສ່ວນບຸກຄົນຕໍ່ຜູ້ຮັບຂໍ້ມູນໃນຕ່າງປະເທດ ສະເພາະກໍລະນີທີ່ກົດຫມາຍຄຸ້ມຄອງ ຂໍ້ມູນສ່ວນບຸກຄົນ ແລະ ກົດຫມາຍອື່ນທີ່ກ່ຽວຂ້ອງກຳໜົດໃຫ້ປະຕິບັດໄດ້ເທົ່ານັ້ນ;

**ການເກັບຮັກສາຂໍ້ມູນສ່ວນບຸກຄົນໃຫ້ມີຄວາມຖືກຕ້ອງ**

ລາວ ໂຄຄາ-ໂຄລາ ຈະດຳເນີນການດ້ວຍຄວາມລະມັດລະວັງເພື່ອໃຫ້ໝັ້ນໃຈວ່າຂໍ້ມູນສ່ວນບຸກຄົນທີ່ໄດ້ຮັບການຈັດເກັບມານັ້ນ ມີ ຄວາມຖືກຕ້ອງ ສົມບູນ ແລະໄດ້ຮັບການປັບປຸງຢູ່ສະເໝີ

## ມາດຕະການເກັບຮັກສາຄວາມປອດໄພຂອງຂໍ້ມູນ

ລາວ ໂຄຄາ-ໂຄລາໃຊ້ລະບົບຖືຮັກສາຄວາມປອດໄພທີ່ມີມາດຕະຖານສູງທັງໃນດ້ານເທັກໂນໂລຢີ ແລະ ຂະບວນການ ເພື່ອປ້ອງກັນ ການໂຈນກຳຂໍ້ມູນ ລາວ ໂຄຄາ-ໂຄລາໄດ້ລົງທຶນ ທຸ້ມເທເວລາ ແລະບຸກຄລາກອນ ເປັນຈຳນວນຫລາຍ ເພື່ອໃຫ້ໝັ້ນໃຈວ່າລາວ ໂຄຄາ-ໂຄລາມີການ ຖືຮັກສາຄວາມປອດໄພທີ່ໄດ້ມາດຕະຖານສູງ ຂໍ້ມູນຂອງເຈົ້າຂອງຂໍ້ມູນຈະປອດໄພ ດ້ວຍລະບົບຄອມພິວເຕີຂອງລາວ ໂຄຄາ-ໂຄລາໄດ້ຮັບການປົກປ້ອງດ້ວຍ ມາດຕະການຕ່າງໆ ຂອງລາວ ໂຄຄາ-ໂຄລາ ເຊັ່ນ: Data Loss Prevention, Firewall, Endpoint Security, Log and Security Monitor (SOC), Vulnerability Assessment, Penetration Test ເປັນຕົ້ນ;

ເຖິງແມ່ນລາວ ໂຄຄາ-ໂຄລາຈະທຸ້ມເທ ແລະໃຊ້ຄວາມພະຍາຍາມໃນການເບິ່ງແຍງຂໍ້ມູນໃຫ້ມີຄວາມ ປອດໄພ ດ້ວຍການໃຊ້ເຄື່ອງມືທາງ ເທັກນິກຮ່ວມກັບການບໍລິຫານຈັດການໂດຍບຸກຄົນ ເພື່ອຄວບຄຸມແລະຖື ຮັກສາຄວາມປອດໄພຂໍ້ມູນ ບໍ່ໃຫ້ມີການເຂົ້າເຖິງຂໍ້ມູນສ່ວນຕົວ ຫລື ຂໍ້ມູນທີ່ເປັນຄວາມລັບຂອງເຈົ້າຂອງຂໍ້ມູນ ໂດຍບໍ່ໄດ້ຮັບອະນຸຍາດ ແຕ່ອາດບໍ່ສາມາດປ້ອງກັນຄວາມຜິດພາດໄດ້ທຸກກໍລະນີ ເຊັ່ນ: ການປົກປ້ອງຂໍ້ມູນ ຂອງເຈົ້າຂອງຂໍ້ມູນຈາກການຖືກຈູ່ໂຈມໂດຍໄວຣັດຄອມພິວເຕີ ຫລືຖືກເຂົ້າເຖິງໂດຍບຸກຄົນທີ່ບໍ່ມີອຳນາດໄດ້ ເຈົ້າຂອງຂໍ້ມູນຈຶ່ງຄວນຕິດຕາມຂ່າວສານກ່ຽວກັບຄອມພິວເຕີໃຫ້ທັນສະໄໝຢູ່ສະເໝີ ຕິດຕັ້ງຊອບແວປະເພດ Personal

Firewall ເພື່ອປ້ອງກັນຄອມພິວເຕີຈາກການ ຈູ່ໂຈມ ຫລືໂຈນກຳຂໍ້ມູນ ຄວນກວດສອບສຖານະທາງການເງິນ ຢ່າງ ສະໝ່ຳສະເໝີ ເຊັ່ນ: ຍອດເງິນຄົງເຫຼືອ ມື້ທີ່ທຳລາຍການ ລວມໄປເຖິງ ເກັບຖືຮັກສາຂໍ້ມູນສ່ວນບຸກຄົນ ສ ະຖານະທາງການເງິນໄວ້ເປັນຄວາມລັບ ເປັນຕົ້ນ;

## ສິດທິຂອງເຈົ້າຂອງຂໍ້ມູນ

ພາຍໃຕ້ກົດໝາຍຄຸ້ມຄອງຂໍ້ມູນສ່ວນບຸກຄົນ ເຈົ້າຂອງຂໍ້ມູນມີສິດທິດັ່ງຕໍ່ໄປນີ້ ໂດຍການໃຊ້ສິດທິດັ່ງ ກ່າວ ຕ້ອງເປັນໄປ ຕາມທີ່ກົດໝາຍກຳນົດໄວ້ ແລະ ອາດມີການປັບປຸງແກ້ໄຂໃຫ້ເປັນໄປຕາມຫຼັກເກນໃດໆ ທີ່ ກົດໝາຍຄຸ້ມຄອງຂໍ້ມູນສ່ວນບຸກຄົນ ກຳນົດໃຫ້ ຄື:

- ສິດທິໃນການເຂົ້າເຖິງຂໍ້ມູນສ່ວນບຸກຄົນ
- ສິດທິໃນການແກ້ໄຂຂໍ້ມູນສ່ວນບຸກຄົນໃຫ້ຖືກຕ້ອງ
- ສິດທິໃນການໂອນຖ່າຍຂໍ້ມູນສ່ວນບຸກຄົນ
- ສິດທິໃນການຂໍໃຫ້ລຶບຂໍ້ມູນສ່ວນບຸກຄົນ
- ສິດທິໃນການລະງັບໃຊ້ຂໍ້ມູນສ່ວນບຸກຄົນ

- ສິດທິໃນການຄັດຄ້ານການເກັບ ການໃຊ້ ການເປີດເຜຍຂໍ້ມູນສ່ວນບຸກຄົນ
- ການຖອນຄວາມຍິນຍອມ

ໃນກໍລະນີທີ່ເຈົ້າຂອງຂໍ້ມູນເຄີຍໃຫ້ການຍິນຍອມໃດໆ ໄວ້ໃຫ້ແກ່ລາວ ໂຄຄາ-ໂຄລາ (ທີ່ບໍ່ແມ່ນການຍິນຍອມຕາມທີ່ກົດໝາຍອື່ນກຳນົດ) ເຈົ້າຂອງຂໍ້ມູນສາມາດຍົກເລີກການຍິນຍອມດັ່ງກ່າວເມື່ອໃດກໍໄດ້ ແຕ່ອາດກະທົບຕໍ່ທຸລະກຳຫລືການໃຫ້ບໍລິການ ບາງປະເພດເຊິ່ງຈະໄດ້ແຈ້ງໃຫ້ເຈົ້າຂອງຂໍ້ມູນຮູ້ໃນເວລາທີ່ເຈົ້າຂອງຂໍ້ມູນຂໍຖອນຄວາມຍິນຍອມ

**ການທົບທວນແລະປັບປຸງແປງນະໂຍບາຍຄວາມເປັນສ່ວນຕົວຂອງລາວ ໂຄຄາ-ໂຄລາ**

ບໍລິສັດພິຈາລະນາທົບທວນນະໂຍບາຍຄວາມເປັນສ່ວນຕົວຂອງລາວ ໂຄຄາ-ໂຄລານີ້ເມື່ອມີເຫດອັນສົມຄວນ ເພື່ອໃຫ້ສອດຄ່ອງກັບ ແນວທາງການດຳເນີນງານແລະກົດໝາຍ ແລະສະເໜີແນະການແກ້ໄຂປັບປຸງແປງຕາມທີ່ຈຳເປັນຫລືສົມຄວນ ເພື່ອໃຫ້ ຄະນະກຳມະການບໍລິສັດພິຈາລະນາອະນຸມັດຕໍ່ໄປ;

ທັງນີ້ ຫາກມີການປັບປຸງແປງນະໂຍບາຍຄວາມເປັນສ່ວນຕົວຂອງລາວ ໂຄຄາ-ໂຄລາ ບໍລິສັດຈະປະກາດແຈ້ງການປັບປຸງແປງ ໃຫ້ຮູ້ຢ່າງລະອຽດ;

**ການຕິດຕໍ່**

1. ໃນກໍລະນີທີ່ເຈົ້າຂອງຂໍ້ມູນປະສົງທີ່ຈະໃຊ້ສິດທິຕາມນະໂຍບາຍໃນຂໍ້ນີ້ ຂໍໃຫ້ເຈົ້າຂອງຂໍ້ມູນ Download "ແບບຟອມຮ້ອງຂໍໃຊ້ສິດທິຂອງເຈົ້າຂອງຂໍ້ມູນ" ທາງ www.thainamthip.co.th ແລະ ສົ່ງແບບຟອມທີ່ຂຽນຂໍ້ຄວາມແລ້ວທາງອີເມນ DPO@thainamthip.co.th ຫລື ສາມາດຕິດຕໍ່ຂໍແບບຟອມດັ່ງກ່າວໄດ້ທີ່ ສຳນັກງານໃຫຍ່ ລາວ ໂຄຄາ-ໂຄລາ ສາຂາ ແລະ ຫ້ອງການຕົວແທນ
2. ໃນກໍລະນີທີ່ເຈົ້າຂອງຂໍ້ມູນປະສົງຈະຮ້ອງຮຽນກ່ຽວກັບການປະມວນຜົນຂໍ້ມູນສ່ວນບຸກຄົນຂອງເຈົ້າຂອງຂໍ້ມູນ ຂໍໃຫ້ເຈົ້າຂອງຂໍ້ມູນ Download "ແບບຟອມຮ້ອງຮຽນການປະມວນຜົນຂໍ້ມູນສ່ວນບຸກຄົນ" ທາງ www.thainamthip.co.th ແລະສົ່ງແບບຟອມທີ່ຂຽນຂໍ້ຄວາມແລ້ວທາງອີເມລ DPO@thainamthip.co.th ຫລື ສາມາດຕິດຕໍ່ຂໍແບບຟອມດັ່ງກ່າວໄດ້ທີ່ ສຳນັກງານໃຫຍ່ຂອງລາວ ໂຄຄາ-ໂຄລາ, ສາຂາ ແລະ ຫ້ອງການຕົວແທນ;
3. ກໍລະນີມີຂໍ້ສົງໄສ ຂໍ້ສະເໜີແນະ ຫລື ຄວາມກັງວົນກ່ຽວກັບນະໂຍບາຍນີ້ ລາວ ໂຄຄາ-ໂຄລາໄດ້ມອບໝາຍໃຫ້ ພະແນກ ບຸກຄະລາກອນ ແລະ ຊ່ວຍບໍລິຫານ ເປັນເຈົ້າໜ້າທີ່ຄຸ້ມຄອງຂໍ້ມູນສ່ວນບຸກຄົນຂອງ ລາວ ໂຄຄາ-ໂຄລາ ຫາກເຈົ້າຂອງຂໍ້ມູນມີຂໍ້ສົງໄສ ຫລື ມີຄຳຖາມກ່ຽວກັບນະໂຍບາຍນີ້ ເຈົ້າຂອງຂໍ້ມູນສາມາດຕິດຕໍ່ໄດ້ ທາງ ຫ້ອງການບໍລິສັດ ລາວໂຄຄາ-ໂຄລາ ບໍລິສັດຈຳກັດ, ພະແນກບຸກຄະລາກອນ ແລະ ຊ່ວຍບໍລິຫານ, ສຳນັກງານໃຫຍ່ຕັ້ງຢູ່ບ້ານ ໄຮ່ ເມືອງ ໄຊທານີ ນະຄອນຫລວງວຽງ

ຈັນ. ໂທລະສັບ: (856-21) 781 000 ຫລື www.thainamthip.co.th ຫລື ອີເມລ: DPO@thainamthip.co.th.

**ສົ່ງເຖິງ:** ເຈົ້າໜ້າທີ່ຄຸ້ມຄອງຂໍ້ມູນສ່ວນບຸກຄົນ. ພະແນກ ບຸກຄະລາກອນ ແລະ ຊ່ວຍບໍລິຫານ

**ບໍລິສັດ ລາວ ໂຄຄາ-ໂຄລາ ບອັຕຕລິງ ຈຳກັດ**

ທີ່ຢູ່: ບ້ານໄຮ່, ເມືອງໄຊທານີ ນະຄອນຫລວງວຽງຈັນ ໂທລະສັບ: (856-21) 781 000;

**ໝາຍເຫດ:**

1. ກະລຸນາລະບຸລາຍລະອຽດການຕິດຕໍ່ຂອງເຈົ້າຂອງຂໍ້ມູນ ເມື່ອມີການຮ້ອງຮຽນຫລືຂໍໃຊ້ສິດທິຮຽກຮ້ອງ ເພື່ອໃຫ້ລາວ ໂຄຄາ-ໂຄລາ ສາມາດຕິດຕໍ່ກັບໂດຍໄວທີ່ສຸດ
2. ລາວ ໂຄຄາ-ໂຄລາ ບໍ່ຄິດຄ່າທຳນຽມໃນການຕິດຕໍ່ກ່ຽວກັບຂໍ້ມູນສ່ວນບຸກຄົນຂອງເຈົ້າຂອງຂໍ້ມູນແຕ່ອາດມີ ຄ່າໃຊ້ຈ່າຍສຳລັບການດຳເນີນການຕາມຄຳຂໍພາຍໃຕ້ກົດໝາຍຄຸ້ມຄອງຂໍ້ມູນສ່ວນບຸກຄົນຊຶ່ງນອກເໜືອໄປຈາກ ຄຳຂໍກ່ຽວກັບການປ່ຽນແປງຂໍ້ມູນສ່ວນບຸກຄົນຂອງເຈົ້າຂອງຂໍ້ມູນ;

| ແບບຄຳຮ້ອງຂໍໃຊ້ສິດທິຂອງເຈົ້າຂອງຂໍ້ມູນ<br>*(Data Subject Action Request Form)* |
|---|

ຕາມກົດໝາຍວ່າດ້ວຍການປົກປ້ອງຂໍ້ມູນເອເລັກໂຕຣນິກ ສະບັບເລກທີ: 25/ສພຊ, ລົງວັນທີ 12 ພຶດສະພາ 2017 ທີ່ໄດ້ກຳນົດຫລັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ການຕິດຕາມ ກວດກາການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານປົກປ້ອງຂໍ້ມູນເອເລັກໂຕຣນິກ ເພື່ອເຮັດໃຫ້ການເກັບກຳ, ດານເຂົ້າເຖິງ, ການນຳໃຊ້ ແລະ ການເປີດເຜີຍຂໍ້ມູນນັ້ນມີຄວາມປອດໄພ ແລະ ຖືກຕ້ອງເພື່ອປົກປ້ອງສິດແລະຜົນປະໂຫຍດຂອງບຸກຄົນ ຫລື ນິຕິບຸກຄົນ ໂດຍຕ້ອງໃຫ້ຂໍ້ມູນກັບ ບໍລິສັດ ລາວໂຄຄາ-ໂຄລາ ບອັຕຕລິງ ຈຳກັດ ຕາມແບບຟອມດັ່ງຕໍ່ໄປນີ້:

## ຂໍ້ມູນຂອງຜູ້ຍື່ນຄຳຮ້ອງຂໍ

<u>ລາຍລະອຽດຜູ້ຍື່ນຄຳຂໍ</u>

| | |
|---|---|
| ຊື່-ນາມສະກຸນ: | ຊື່ພາສາລາວ ແລະ ອັງກິດ (ຖ້າມີ)<br>______________________________<br>____________<br>______________________________<br>____________ |
| ທີ່ຢູ່: | ທີ່ຢູ່______________________________ |
| ເບີຕິດຕໍ່: | ໂທລະສັບ______________________________ |
| Email: | email______________________________ |
| ຄວາມສຳພັນຕໍ່ລາວ ໂຄຄາ-ໂຄລາ | ລູກຄ້າ / ຄູ່ຄ້າ / ບຸກຄະລາກອນ / ຜູ້ມາຕິດຕໍ່______________ |

<u>*ທ່ານເປັນເຈົ້າຂອງຂໍ້ມູນ ຫລື ບໍ່?*</u>

☐ ຜູ້ຍື່ນຄຳຮ້ອງເປັນບຸກຄົນດຽວກັບເຈົ້າຂອງຂໍ້ມູນ

ທັງນີ້ ຂ້າພະເຈົ້າໄດ້ແນບເອກະສານດັ່ງຕໍ່ໄປນີ້ ເພື່ອການກວດສອບຕົວຕົນ ແລະທີ່ຢູ່ຂອງຜູ້ຍື່ນຄຳຮ້ອງ ເພື່ອໃຫ້ ລາວ ໂຄຄາ-ໂຄລາ ສາມາດດຳເນີນການຕາມສິດທີທີ່ຮ້ອງຂໍໄດ້ຢ່າງຖືກຕ້ອງ;

ເອກະສານພິສູດຕົວຕົນ ແລະ/ຫລື ພິສູດຖິ່ນທີ່ຢູ່[1]

- ☐ ສຳເນົາບັດປະຈຳຕົວປະຊາຊົນ (ກໍລະນີສັນຊາດລາວ)
- ☐ ສຳເນົາຫນັງສືເດີນທາງ (ກໍລະນີຕ່າງຊາດ)
- ☐ ອື່ນໆ (ຖ້າມີ)

☐ ຜູ້ຍື່ນຄຳຮ້ອງເປັນຕົວແທນຂອງເຈົ້າຂອງຂໍ້ມູນ (ກໍລະນີຜູ້ຍື່ນຄຳຮ້ອງເປັນຕົວແທນຂອງເຈົ້າຂອງຂໍ້ມູນ ຕ້ອງຂຽນລາຍລະອຽດເຈົ້າຂອງຂໍ້ມູນຕາມຕາລາງລາຍລະອຽດເຈົ້າຂອງຂໍ້ມູນ)

ລາຍລະອຽດເຈົ້າຂອງຂໍ້ມູນ

| | |
| --- | --- |
| ຊື່-ນາມສະກຸນ: | ຊື່ພາສາລາວ ແລະອັງກິດ (ຖ້າມີ)<br>____________________<br>____________________ |
| ທີ່ຢູ່: | ທີ່ຢູ່____________________<br>____________________ |
| ເບີຕິດຕໍ່: | ໂທລະສັບ____________________ |
| Email: | email____________________ |
| ຄວາມສຳພັນຕໍ່ ລາວ ໂຄຄາ-ໂຄລາ | ລູກຄ້າ / ຄູ່ຄ້າ / ບຸກຄະລາກອນ / ຜູ້ມາຕິດຕໍ່<br>____________________ |

ທັງນີ້ ຂ້າພະເຈົ້າໄດ້ແນບເອກະສານດັ່ງຕໍ່ໄປນີ້ ເພື່ອການກວດສອບອຳນາດ ຕົວຕົນ ແລະຖິ່ນທີ່ຢູ່ຂອງຜູ້ຍື່ນຄຳຮ້ອງ ແລະ ເຈົ້າຂອງຂໍ້ມູນ ເພື່ອໃຫ້ ລາວໂຄຄາ-ໂຄລາສາມາດດຳເນີນການຕາມສິດທີ່ຮ້ອງຂໍໄດ້ຢ່າງຖືກຕ້ອງ;

[1] ພິຈາລະນາຕາມຄວາມເໝາະສົມຂອງສະຖານນະການວ່າເອກະສານຫລືຫຼັກຖານໃດບ້າງທີ່ສາມາດບົ່ງຊີ້ຕົວຕົນຂອງຜູ້ມາຕິດຕໍ່ຍື່ນ ຄຳຮ້ອງຂໍໄດ້

ເອກະສານພິສູດອຳນາດຈະດຳເນີນການແທນ

□ ຫນັງສືມອບອຳນາດ

ໝາຍເຫດ: ຫນັງສືມອບອຳນາດຈະຕ້ອງມີລັກສະນະດັ່ງນີ້

(1) ເນື້ອຄວາມຢ່າງຫນ້ອຍລະບຸ "ໃຫ້ອຳນາດຜູ້ຍື່ນຄຳຮ້ອງໃນການດຳເນີນການຕິດຕໍ່ຮ້ອງຂໍອະນຸຍາດໃຊ້ສິດທິ *[-ກະລຸນາລະບຸ ຊື່ຜູ້ຂໍໃຊ້ສິດທິ]* ______________________ ໃນຂໍ້ມູນສ່ວນບຸກຄົນຂອງເຈົ້າຂອງຂໍ້ມູນຜູ້ມອບອຳນາດຕໍ່ ລາວ ໂຄຄາ-ໂຄລາ ລວມເຖິງດຳເນີນການທີ່ກ່ຽວຂ້ອງຈົນສຳເລັດຕາມທີ່ມອບໝາຍ"

(2) ມີການລົງນາມໂດຍຜູ້ມອບອຳນາດຢ່າງຊັດເຈນ

(3) ລົງວັນທີກ່ອນວັນທີຍື່ນຄຳຮ້ອງຂໍ

ເອກະສານພິສູດຕົວຕົນ ແລະ/ຫລື ຖິ່ນທີ່ຢູ່[2]

□ ສຳເນົາບັດປະຈຳຕົວປະຊາຊົນຂອງ **ທ່ານ ແລະ ເຈົ້າຂອງຂໍ້ມູນ** (ກໍລະນີສັນຊາດລາວ)

□ ສຳເນົາຫນັງສືເດີນທາງຂອງ **ທ່ານ ແລະ ເຈົ້າຂອງຂໍ້ມູນ** (ກໍລະນີຕ່າງຊາດ)

□ ອື່ນ ໆ (ຖ້າມີ)

ລາວ ໂຄຄາ-ໂຄລາ ຂໍສະຫງວນສິດທິໃນການສອບຖາມຂໍ້ມູນ ຫລື ຮຽກເອກະສານເພີ່ມເຕີມຈາກຜູ້ຍື່ນຄຳຮ້ອງ ຫາກຂໍ້ມູນທີ່ໄດ້ຮັບ ບໍ່ສາມາດສະແດງໃຫ້ເຫັນຢ່າງຊັດເຈນໄດ້ວ່າ ຜູ້ຍື່ນຄຳຮ້ອງເປັນເຈົ້າຂອງຂໍ້ມູນ ຫລືມີອຳນາດໃນການຍື່ນຄຳຮ້ອງຂໍດັ່ງກ່າວ ລາວ ໂຄຄາ-ໂຄລາຂໍສະຫງວນສິດທິໃນການປະຕິເສດຄຳຮ້ອງຂໍຂອງທ່ານ;

[2] ພິຈາລະນາຕາມຄວາມເໝາະສົມຂອງສະຖານນະການວ່າເອກະສານຫລືຫຼັກຖານໃດບ້າງທີ່ສາມາດບົ່ງຊີ້ຕົວຕົນຂອງເຈົ້າຂອງຂໍ້ມູນແລະຜູ້ຮັບມອບອ ານາດໄດ້

**ຂໍ້ມູນສ່ວນບຸກຄົນທີ່ມີຄວາມຕ້ອງການຈະໃຊ້ສິດທິ**

ກະລຸນາເລືອກປະເພດຂອງສິດທິທີ່ຕ້ອງການດຳເນີນການ (ເລືອກໃຊ້ສິດທິປະເພດໃດປະເພດໜຶ່ງເທົ່ານັ້ນ ຖ້າທ່ານມີຄວາມຕ້ອງການຈະໃຊ້ສິດທິຫລາຍກວ່າ 1 ປະເພດ ກະລຸນາສົ່ງແບບຄຳຮ້ອງຂໍໃຊ້ສິດທິຂອງເຈົ້າຂອງຂໍ້ມູນແຍກສະບັບກັນ ເພື່ອປະໂຫຍດໃນ ການດຳເນີນການຕາມຄຳຮ້ອງຂໍຂອງທ່ານ)

□ ການຂໍຍົກເລີກການຍິນຍອມ

ຂໍ້ມູນສ່ວນບຸກຄົນທີ່ຕ້ອງການດຳເນີນການ:.................................................................................

.......................................................................................................................................
.......................................................................................................................................
.......................................................................................................................................
..................................................................................................................................

ແຫຼ່ງທີ່ພົບ (ຖ້າມີ)

.......................................................................................................................................
.......................................................................................................................................
.....................................................................................................................................

.....................................................................................................................................

□ ການຂໍເຂົ້າເຖິງຂໍ້ມູນສ່ວນບຸກຄົນ

ຂໍ້ມູນສ່ວນບຸກຄົນທີ່ຕ້ອງການດຳເນີນການ:.................................................................................

.......................................................................................................................................
.......................................................................................................................................
.......................................................................................................................................
..................................................................................................................................

ແຫຼ່ງທີ່ພົບ (ຖ້າມີ)

.......................................................................................................................................
.......................................................................................................................................
.......................................................................................................................................
..................................................................................................................................

☐ ການຂໍແກ້ໄຂຂໍ້ມູນສ່ວນບຸກຄົນໃຫ້ຖືກຕ້ອງ

ຂໍ້ມູນສ່ວນບຸກຄົນທີ່ຕ້ອງການໃຫ້ດຳເນີນການ: ..............................................................

....................................................................................................

....................................................................................................

....................................................................................................

................................................................................................

ແຫຼ່ງທີ່ພົບ (ຖ້າມີ)

....................................................................................................

....................................................................................................

....................................................................................................

................................................................................................

☐ ການຂໍລຶບຂໍ້ມູນສ່ວນບຸກຄົນ

ຂໍ້ມູນສ່ວນບຸກຄົນທີ່ຕ້ອງການໃຫ້ດຳເນີນການ: ..............................................................

....................................................................................................

....................................................................................................

....................................................................................................

................................................................................................

ແຫຼ່ງທີ່ພົບ (ຖ້າມີ)

....................................................................................................

....................................................................................................

....................................................................................................

................................................................................................

☐ ການຂໍຫ້າມບໍ່ໃຫ້ປະມວນຜົນຂໍ້ມູນສ່ວນບຸກຄົນ

ຂໍ້ມູນສ່ວນບຸກຄົນທີ່ຕ້ອງການໃຫ້ດຳເນີນການ: ..............................................................

....................................................................................................

....................................................................................................

....................................................................................................

................................................................................................

ແຫຼ່ງທີ່ພົບ (ຖ້າມີ)

.....................................................................................................................

.....................................................................................................................

.....................................................................................................................

..................................................................................................................□

ການຂໍໃຫ້ໂອນຍ້າຍຂໍ້ມູນສ່ວນບຸກຄົນ

ຂໍ້ມູນສ່ວນບຸກຄົນທີ່ຕ້ອງການດຳເນີນການ: ....................................................................

.....................................................................................................................

.....................................................................................................................

.....................................................................................................................

..............................................................................................................

ແຫຼ່ງທີ່ພົບ (ຖ້າມີ)

.....................................................................................................................

.....................................................................................................................

.....................................................................................................................

..............................................................................................................

□ ການຂໍຄັດຄ້ານການປະມວນຜົນຂໍ້ມູນສ່ວນບຸກຄົນ

ຂໍ້ມູນສ່ວນບຸກຄົນທີ່ຕ້ອງການດຳເນີນການ: ....................................................................

.....................................................................................................................

.....................................................................................................................

.....................................................................................................................

..............................................................................................................

ແຫຼ່ງທີ່ພົບ (ຖ້າມີ)

.....................................................................................................................

.....................................................................................................................

.....................................................................................................................

..............................................................................................................

**ເຫດຜົນປະກອບຄຳຮ້ອງຂໍ**

ກໍລະນີຊີ້ແຈງເຫດຜົນປະກອບໃນການຮ້ອງຂໍໃຊ້ສິດທິຂອງເຈົ້າຂອງຂໍ້ມູນ ໃຫ້ແນບເອກະສານ ຂໍ້ມູນ

ຫຼັກຖານປະກອບ ເພື່ອໃຫ້ຜູ້ຮັບຜິດຊອບພິຈາລະນາແລະດ າເນີນການຕາມສິດທິຂອງທ່ານຕໍ່ໄປ:

.............................................................................................................................

.............................................................................................................................

......................................................................................................................

**ການສະຫງວນສິດທິຂອງ ລາວ ໂຄຄາ-ໂຄລາ**

ລາວ ໂຄຄາ-ໂຄລາຂໍແຈ້ງໃຫ້ທ່ານຮູ້ວ່າ ຫາກເກີດກໍລະນີດັ່ງຕໍ່ໄປນີ້ ລາວ ໂຄຄາ-ໂຄລາອາດຈະປະຕິເສດຄໍາຮ້ອງຂໍຂອງທ່ານ ເພື່ອໃຫ້ເປັນໄປຕາມກົດໝາຍທີ່ກ່ຽວຂ້ອງເຊັ່ນ:

(1) ທ່ານບໍ່ສາມາດສະແດງໃຫ້ເຫັນຢ່າງຊັດເຈນໄດ້ວ່າຜູ້ຢື່ນຄໍາຮ້ອງເປັນເຈົ້າຂອງຂໍ້ມູນ ຫລື ມີອໍານາດໃນການຍື່ນຄໍາຮ້ອງ ຂໍດັ່ງກ່າວ;

(2) ຄໍາຮ້ອງຂໍດັ່ງກ່າວບໍ່ສົມເຫດສົມຜົນ ເຊັ່ນ: ກໍລະນີທີ່ຜູ້ຮ້ອງຂໍບໍ່ມີສິດທິໃນການຂໍລົບຂໍ້ມູນສ່ວນບຸກຄົນ ຫລື ບໍ່ມີຂໍ້ມູນສ່ວນບຸກຄົນນັ້ນຢູ່ທີ່ລາວໂຄຄາ-ໂຄລາເປັນຕົ້ນ

(3) ຄໍາຮ້ອງຂໍດັ່ງກ່າວເປັນຄໍາຮ້ອງຂໍຟຸ່ມເຟືອຍເຊັ່ນ: ເປັນຄໍາຮ້ອງຂໍທີ່ມີລັກສະນະດຽວກັນ ຫລືມີເນື້ອຫາດຽວກັນຊໍ້າໆ ກັນໂດຍບໍ່ມີເຫດຜົນອັນສົມຄວນ

(4) ການເກັບຖືຮັກສາຂໍ້ມູນສ່ວນບຸກຄົນນັ້ນເພື່ອວັດຖຸປະສົງໃນການໃຊ້ເສລີພາບໃນການສະແດງຄວາມຄິດເຫັນ ຫລື ເປັນໄປຕາມວັດຖຸປະສົງໃນການຈັດທໍາເອກະສານປະຫວັດສາດ ຫລື ຈົດຫມາຍເຫດເພື່ອປະໂຫຍດສາທາລະນະ ຫລື ທີ່ກ່ຽວກັບການສຶກສາວິໄຈ ຫລືສະຖິຕິຊຶ່ງໄດ້ຈັດໃຫ້ມີມາຕຶການປົກປ້ອງທີ່ເໝາະສົມເພື່ອຄຸ້ມຄອງສິດທິແລະ ເສລີພາບຂອງເຈົ້າຂອງຂໍ້ມູນ ຫລືເປັນການດໍາເນີນເພື່ອການປະຕິບັດຫນ້າທີ່ໃນການດໍາເນີນພາລະກິດເພື່ອປະໂຫຍດສາທາລະນະຂອງລາວ ໂຄຄາ-ໂຄລາ ຫລື ການໃຊ້ອໍານາດລັດທີ່ໄດ້ມອບໝາຍໃຫ້ແກ່ລາວ ໂຄຄາ-ໂຄລາ ຫລື ເປັນການເກັບຂໍ້ມູນ ສ່ວນບຸກຄົນທີ່ເປັນຂໍ້ມູນອ່ອນໄຫວ (sensitive data) ທີ່ມີເປັນໃນການປະຕິບັດຫນ້າທີ່ຕາມກົດຫມາຍ ເພື່ອໃຫ້ບັນລຸວັດຖຸປະສົງໃນດ້ານເວດສະສາດປ້ອງກັນ ອາຊີວະເວດສາດ ປະໂຫຍດ ສາທາລະນະດ້ານການ ສາທາລະນະສຸກ.

(5) ການເກັບຮັກສາຂໍ້ມູນສ່ວນບຸກຄົນນັ້ນເປັນໄປເພື່ອການກໍ່ຕັ້ງສິດທິຮຽກຮ້ອງຕາມກົດຫມາຍ ການປະຕິບັດຕາມ ຫລື ການໃຊ້ສິດທິຮຽກຮ້ອງຕາມກົດຫມາຍ ຫລື ການຍົກຂຶ້ນຕໍ່ສູ້ສິດທິຮຽກຮ້ອງຕາມກົດຫມາຍ ຫລື ເພື່ອປະຕິບັດຕາມ ກົດຫມາຍ

(6) ການດໍາເນີນການດັ່ງກ່າວກະທົບໃນດ້ານລົບຕໍ່ສິດທິເສຣີພາບຂອງບຸກຄົນອື່ນໆ

(7) ການປະມວນຜົນຂໍ້ມູນເປັນການປະຕິບັດຕາມກົດຫມາຍຂອງລາວ ໂຄຄາ-ໂຄລາ

(8) ການປະມວນຜົນຂໍ້ມູນນັ້ນເປັນຄວາມຈຳເປັນເພື່ອການປະຕິບັດຫນ້າທີ່ໃນການດຳເນີນພາລະກິດເພື່ອປະໂຫຍດ ສາທາລະນະຂອງລາວ ໂຄຄາ-ໂຄລາ ຫລື ປະຕິບັດຫນ້າທີ່ໃນການໃຊ້ອຳນາດລັດທີ່ໄດ້ມອບໃຫ້ແກ່ລາວ ໂຄຄາ-ໂຄລາ ຫລື ຫນ້າທີ່ ຕາມກົດຫມາຍ

(9) ການປະມວນຜົນຂໍ້ມູນນັ້ນມີຄວາມຈຳເປັນໃນການປະຕິບັດຫນ້າທີ່ຕາມສັນຍາລະຫວ່າງເຈົ້າຂອງຂໍ້ມູນກັບລາວ ໂຄຄາ-ໂຄລາ

(10) ການປະມວນຜົນຂໍ້ມູນມີຄວາມຈຳເປັນເພື່ອປະໂຫຍດໂດຍຊອບດ້ວຍກົດຫມາຍຂອງລາວ ໂຄຄາ-ໂຄລາ

ໂດຍປົກກະຕິ ທ່ານຈະບໍ່ເສຍຄ່າໃຊ້ຈ່າຍໃນການດຳເນີນການຕາມຄຳຮ້ອງຂໍຂອງທ່ານ ແຕ່ເຖິງຢ່າງໃດກໍດີ ຫາກປາກົດຢ່າງຊັດເຈນວ່າ ການຮ້ອງຂໍຂອງທ່ານເປັນຄຳຮ້ອງຂໍທີ່ບໍ່ສົມເຫດສົມຜົນ ຫລືຄຳຮ້ອງຂໍຟຸ່ມເຟືອຍ ລາວ ໂຄຄາ-ໂຄລາ ອາດຄິດ ຄ່າໃຊ້ຈ່າຍໃນການດຳເນີນການຕາມສິດທິແກ່ທ່ານຕາມສົມຄວນ;

**ການຮັບຮູ້ ແລະ ຍິນຍອມ**

ທ່ານໄດ້ອ່ານແລະເຂົ້າໃຈເນື້ອຫາຂອງຄຳຮ້ອງຂໍສະບັບນີ້ຢ່າງລະອຽດແລ້ວ ແລະຢືນຢັນວ່າຂໍ້ມູນຕ່າງໆທີ່ໄດ້ແຈ້ງໃຫ້ແກ່ ລາວ ໂຄຄາ-ໂຄລາຮັບຮູ້ນັ້ນເປັນຄວາມຈິງ ຖືກຕ້ອງ ທ່ານເຂົ້າໃຈດີວ່າການກວດສອບເພື່ອຢືນຢັນອຳນາດ ຕົວຕົນ ແລະ ທີ່ຢູ່ນັ້ນເປັນຈຳເປັນທີ່ສຸດເພື່ອພິຈາລະນາດຳເນີນການຕາມສິດທິທີ່ທ່ານຮ້ອງຂໍ ຫາກທ່ານໃຫ້ຂໍ້ມູນທີ່ຜິດພາດດ້ວຍເຈດນາບໍ່ໂປ່ງໃສ່ທ່ານອາດຖືກດຳເນີນຄະດີຕາມກົດຫມາຍໄດ້ ແລະ ລາວ ໂຄຄາ-ໂຄລາອາດຂໍຂໍ້ມູນເພີ່ມເຕີມຈາກທ່ານເພື່ອການກວດສອບດັ່ງກ່າວເພື່ອໃຫ້ການ ດຳເນີນການຕາມຄຳຮ້ອງຂໍຂອງທ່ານຢ່າງຖືກຕ້ອງຄົບຖ້ວນຕໍ່ໄປ

ດ້ວຍເຫດນີ້ ທ່ານຈຶ່ງໄດ້ລົງນາມໄວ້ ເພື່ອເປັນຫຼັກຖານ

ລົງຊື່ ................................ ຜູ້ຍື່ນຄຳຮ້ອງ

(...................................)

ວັນທີ ....................................

ແບບຟອມຮ້ອງຮຽນການປະມວນຜົນຂໍ້ມູນສ່ວນບຸກຄົນ

*(Personal Data Complaint Form)*

ຕາມກົດໝາຍວ່າດ້ວຍການປົກປ້ອງຂໍ້ມູນເອເລັກໂຕຣນິກ ສະບັບເລກທີ: 25/ສພຊ, ລົງວັນທີ 12 ພຶດສະພາ 2017 ທີ່ໄດ້ກຳນົດໃຫ້ ບໍລິສັດ ລາວໂຄຄາ-ໂຄລາ ບອີຕຕລິງ ຈຳກັດ ໃນຖານະຜູ້ເກັບ ແລະ ຄຸ້ມຄອງຂໍ້ມູນທັງໃນລະບົບຄອມພິວເຕີ ຫລື ເອກະສານຂໍ້ມູນ ແມ່ນສາມາດປະມ່ວນຜົນຂໍ້ມູນ, ເພື່ອເກັບຮັກສາໄວ້ ແລະ ຈະບໍ່ເປີດເຜີຍໃຫ້ບຸກຄົນ ຫລື ນິຕິບຸກຄົນໃດ ນອກເໜືອຈາກການກຳນົດໄວ້ໃນເອກະສານສະເພາະ ຫລື ການແຈ້ງການສະເພາະຂອງອົງການລັດທີ່ມີສິດອຳນາດ. ຫາກເຈົ້າຂອງຂໍ້ມູນຕ້ອງການຂໍ້ມູນ ຫລື ບຸກຄົນອື່ນຕ້ອງການຂໍ້ມູນ ກໍ່ສາມາດປະກອບແບບຟອມຕາມຂ້າງລຸ່ມນີ້ ເພື່ອໃຫ້ທາງ ບໍລິສັດ ລາວໂຄຄາ-ໂຄລາ ບອີຕຕລິງ ຈຳກັດ ໄດ້ກວດສອບ ປະມ່ວນຂໍ້ມູນໃຫ້ຕາມເງື່ອນໄຂທາງກົດໝາຍ ແລະ ນິຕິກຳອື່ນທີ່ກ່ຽວຂ້ອງກຳນົດໄວ້.

**ຂໍ້ມູນຂອງຜູ້ຍື່ນຄຳຮ້ອງ**

<u>ລາຍລະອຽດຜູ້ຍື່ນຄຳຮ້ອງ</u>

| | |
| --- | --- |
| ຊື່-ນາມສະກຸນ: | ຊື່ພາສາລາວ ແລະ ອັງກິດ (ຖ້າມີ) |
| ທີ່ຢູ່: | ທີ່ຢູ່ |
| ເບີຕິດຕໍ່: | ໂທລະສັບ |
| Email: | email |
| ຄວາມສຳພັນຕໍ່ລາວ ໂຄຄາ-ໂຄລາ | ລູກຄ້າ / ຄູ່ຄ້າ / ບຸກຄະລາກອນ |

<u>ທ່ານເປັນເຈົ້າຂອງຂໍ້ມູນ ຫລື ບໍ່ ?</u>

□ ຜູ້ຢື່ນຄໍາຮ້ອງເປັນບຸກຄົນດຽວກັບເຈົ້າຂອງຂໍ້ມູນ

ທັງນີ້ ຂ້າພະເຈົ້າໄດ້ແນບເອກະສານດັ່ງຕໍ່ໄປນີ້ ເພື່ອການກວດສອບຕົວຕົນ ແລະຖິ່ນທີ່ຢູ່ຂອງຜູ້ຍື່ນຄໍາຮ້ອງ ເພື່ອໃຫ້ລາວ ໂຄຄາ-ໂຄລາສາມາດດໍາເນີນການກວດສອບໄດ້ຢ່າງຖືກຕ້ອງ

<u>ເອກະສານພິສູດຕົວຕົນ ແລະ/ຫລື ພິສູດຖິ່ນທີ່ຢູ່</u>[1]

□ ສໍາເນົາບັດປະຈໍາຕົວປະຊາຊົນ (ກໍລະນີສັນຊາດລາວ)

□ ສໍາເນົາຫນັງສືເດີນທາງ (ກໍລະນີຕ່າງຊາດ)

□ ອື່ນໆ (ຖ້າມີ)

□ ຜູ້ຍື່ນຄໍາຮ້ອງເປັນຕົວແທນຂອງເຈົ້າຂອງຂໍ້ມູນ (ກໍລະນີຜູ້ຍື່ນຄໍາຮ້ອງເປັນຕົວແທນຂອງເຈົ້າຂອງຂໍ້ມູນ ຕ້ອງຂຽນລາຍລະອຽດເຈົ້າຂອງຂໍ້ມູນຕາມຕາລາງລາຍລະອຽດເຈົ້າຂອງຂໍ້ມູນ)

[1] ພິຈາລະນາຕາມຄວາມເໝາະສົມຂອງສະຖານນະການວ່າເອກະສານຫລືຫຼັກຖານໃດບ້າງທີ່ສາມາດບົ່ງຊີ້ຕົວຕົນຂອງຜູ້ມາຕິດຕໍ່ຢື່ນຄໍາຮ້ອງ ໄດ້

<u>ລາຍລະອຽດເຈົ້າຂອງຂໍ້ມູນ</u>

| | |
|---|---|
| ຊື່-ນາມສະກຸນ: | ຊື່ພາສາລາວ ແລະອັງກິດ (ຖ້າມີ) |
| ທີ່ຢູ່: | ທີ່ຢູ່ |
| ເບີຕິດຕໍ່: | ໂທລະສັບ |
| Email: | Email |
| ຄວາມສໍາພັນຕໍ່ລາວ ໂຄຄາ-ໂຄລາ | ລູກຄ້າ / ຄູ່ຄ້າ / ບຸກຄະລາກອນ |

ທັງນີ້ ຂ້າພະເຈົ້າໄດ້ແນບເອກະສານດັ່ງຕໍ່ໄປນີ້ ເພື່ອການກວດສອບອໍານາດ ຕົວຕົນ ແລະຖິ່ນທີ່ຢູ່ຂອງຜູ້ຍື່ນຄໍາຮ້ອງ ແລະ ເຈົ້າຂອງຂໍ້ມູນ ເພື່ອໃຫ້ລາວ ໂຄຄາ-ໂຄລາສາມາດດໍາເນີນການກວດສອບໄດ້ຢ່າງຖືກຕ້ອງ;

<u>ເອກະສານພິສູດອໍານາດດໍາເນີນການແທນ</u>

□ ຫນັງສືມອບອໍານາດ

ໝາຍເຫດ: ຫນັງສືມອບອໍານາດຈະຕ້ອງມີລັກສະນະດັ່ງນີ້:

(1) ເນື້ອຄວາມຢ່າງນ້ອຍລະບຸ "ໃຫ້ອໍານາດຜູ້ຍື່ນຄໍາຮ້ອງໃນການດໍາເນີນການຕິດຕໍ່ຮ້ອງຮຽນການປະມວນຜົນຂໍ້ມູນ ສ່ວນບຸກຄົນທີ່ບໍ່ຖືກຕ້ອງໃນຂໍ້ມູນສ່ວນບຸກຄົນຂອງເຈົ້າຂອງຂໍ້ມູນຜູ້ມອບອໍານາດຕໍ່ລາວ ໂຄຄາ-ໂຄລາ ລວມໄປເຖິງດໍາເນີນການທີ່ ກ່ຽວຂ້ອງຈົນສໍາເລັດການ"

(2) ມີການລົງນາມໂດຍຜູ້ມອບອໍານາດຢ່າງຊັດເຈນ

(3) ລົງວັນທີກ່ອນວັນທີຍື່ນຄໍາຮ້ອງ

<u>ເອກະສານພິສູດຕົວຕົນແລະ/ຫລືຖິ່ນທີ່ຢູ່</u>[2]

- ☐ ສຳເນົາບັດປະຈຳຕົວປະຊາຊົນຂອງ **<u>ທ່ານ ແລະ ເຈົ້າ ຂອງຂໍ້ມູນ</u>** (ກໍລະນີສັນຊາດລາວ)
- ☐ ສຳເນົາໜັງສືເດີນທາງຂອງ **<u>ທ່ານ ແລະ ເຈົ້າ ຂອງຂໍ້ມູນ</u>** (ກໍລະນີຕ່າງຊາດ)
- ☐ ອື່ນ ໆ (ຖ້າມີ)

ລາວ ໂຄຄາ-ໂຄລາຂໍສະຫງວນສິດທີໃນການສອບຖາມຂໍ້ມູນ ຫລືຮຽກເອກະສານເພີ່ມເຕີມຈາກຜູ້ຍື່ນຄຳຮ້ອງ ຫາກຂໍ້ມູນທີ່ໄດ້ຮັບ ບໍ່ສາມາດສະແດງໃຫ້ເຫັນຢ່າງຊັດເຈນໄດ້ວ່າ ຜູ້ຍື່ນຄຳຮ້ອງເປັນເຈົ້າຂອງຂໍ້ມູນຫລືມີອຳນາດໃນການຍື່ນຄຳຮ້ອງດັ່ງກ່າວ ລາວ ໂຄຄາ-ໂຄລາຂໍສະຫງວນສິດທີໃນການປະຕິເສດຄຳຮ້ອງຂອງທ່ານ

**ລາຍລະອຽດການຮ້ອງຮຽນ**

| | **ລາຍລະອຽດຂອງເຫດການ** |
| --- | --- |
| ມື້ແລະເວລາການແຈ້ງການປະມວນຜົນ ຂໍ້ມູນໂດຍບໍ່ຖືກຕ້ອງ: | [DD/MM/YY ເວລາ [*] ນ.] |

[2] ພິຈາລະນາຕາມຄວາມເໝາະສົມຂອງສະຖານນະການວ່າເອກະສານຫລືຫຼັກຖານໃດບ້າງທີ່ສາມາດບົ່ງຊີ້ຕົວຕົນຂອງເຈົ້າຂອງຂໍ້ມູນແລະຜູ້ຮັບມອບອ ຳນາດໄດ້

## ລາຍລະອຽດການຮ້ອງຮຽນ

| | ລາຍລະອຽດຂອງເຫດການ | |
|---|---|---|
| ມື້ແລະເວລາທີ່ພົບການປະມວນຜົນ ຂໍ້ມູນໂດຍບໍ່ຖືກຕ້ອງ: | ວັນ/ເດືອນ/ປີ ເວລາ [*] ນ. | |
| ປະເພດຂອງເຈົ້າຂອງຂໍ້ມູນ: | □ ລູກຄ້າ ແລະບຸກຄົນທີ່ກ່ຽວຂ້ອງ<br>□ ກຳມະການ ແລະຜູ້ບໍລິຫານຂອງ ລາວ ໂຄຄາ-ໂຄລາ<br>□ ຄູ່ຄ້າ ແລະບຸກຄົນທີ່ກ່ຽວຂ້ອງ<br>□ ບຸກຄົນພາຍນອກ | □ ພະນັກງານຂອງລາວ ໂຄຄາ-ໂຄລາ<br>□ ລູກຈ້າງຕາມສັນຍາຈ້າງ ຫລືຜູ້ທີ່ເຮັດວຽກ ຫລືປະຕິບັດງານໃຫ້ລາວ ໂຄຄາ-ໂຄລາ<br>□ ທີ່ປຶກສາ ແລະບຸກຄົນທີ່ກ່ຽວຂ້ອງ |
| ປະເພດຂອງຂໍ້ມູນສ່ວນບຸກຄົນທີ່ຖືກປະມ່ວນຜົນໂດຍບໍ່ຖືກຕ້ອງ: | □ ຂໍ້ມູນທົ່ວໄປ ເຊັ່ນ: ຊື່-ນາມສະກຸນ, ທີ່ຢູ່ ໝາຍເລກໂທລະສັບ ອີເມລ ວັນ/ເດືອນ/ປີເກີດ ຂໍ້ມູນການຖືຫຸ້ນ-ກຳມະການ<br><br>□ ຂໍ້ມູນທາງການເງິນ | □ ຂໍ້ມູນອ່ອນໄຫວ ເຊັ່ນ: ສັນຊາດ ເຊື້ອ ກຣຸບເລືອດ, ຂໍ້ມູນສຸຂະພາບ ປະຫວັດອາດສະຍາກຳ ຂໍ້ມູນທາງຊີວພາບ ຄວາມມັກທາງເພດ<br><br>□ ຂໍ້ມູນທາງຄອບຄົວ ຜູ້ໃຫ້ຂໍ້ມູນ |

[3]ເຊັ່ນ ພົບການປະມວນຜົນໂດຍບໍ່ໄດ້ຮັບຄວາມຍິນຍອມທາງຊ່ອງທາງ [*]/ໄດ້ຮັບແຈ້ງວ່າບໍລິສັດ Call Center ວ່າໄດ້ຮັບຂໍ້ມູນຈາກໄທມ໌ ເທີພຢ໌

**ລາຍລະອຽດການຮ້ອງຮຽນ**

| | ລາຍລະອຽດຂອງເຫດການ |
|---|---|
| | □ ເອກະສານທາງລັດຖະການ ເຊັ່ນ: ບັດປະຈຳຕົວປະຊາຊົນ ໜັງສືເດີນທາງ ໃບຂັບຂີ່ ບັດພະນັກງານລັດຖະກອນ □ ເອກະສານທີ່ອອກໂດຍເອກະຊົນ ເຊັ່ນ: ບັດປະຈຳຕົວພະນັກງານ ບັນສະມາຊິກ ບັດເຄຣດິດ ນາມບັດ<br>□ ຂໍ້ມູນອື່ນໆ<br>......................................................................................... |
| ທ່ານຮັບຮູ້ຜົນການປະເມີນຜົນໂດຍບໍ່ຖືກຕ້ອງໄດ້ຢ່າງໃດ[4]: | |
| ລາຍລະອຽດໂດຍສະຫລຸບຜົນການປະເມີນຜົນໂດຍບໍ່ຖືກຕ້ອງ ແລະ ຜົນກະທົບ (ຖ້າມີ)[5] : | |

**ບໍລິສັດ ລາວໂຄຄາ-ໂຄລາ ບອັຕຕລິງ ຈຳກັດ**

**ຜູ້ຈັດການທົ່ວໄປ**

ໝາຍເຫດ: ຜູ້ຮ້ອງຮຽນອາດແນບເອກະສານຫຼັກຖານເທົ່າທີ່ມີຕໍ່ລາວ ໂຄຄາ-ໂຄລາ ເພື່ອປະກອບການພິຈາລະນາເຫດການດັ່ງກ່າວໄດ້ ຢ່າງຖືກຕ້ອງ;

[4] ເຊັ່ນ: ພົບເຫັນຕາມ Social Media/ໄດ້ຮັບການຕິດຕໍ່ຈາກທາງຜູ້ແອບອ້າງ

[5] ເພື່ອຂະຫຍາຍຄວາມລັກສະນະເຫດປະມວນຜົນຂໍ້ມູນໂດຍບໍ່ຖືກຕ້ອງ ເພື່ອໃຫ້ເຂົ້າໃຈເນື້ອຫາຂອງການປະມວນຜົນຂໍ້ມູນສ່ວນບຸກຄົນ ໂດຍອະທິບາຍເນື້ອຫາເທົ່າທີ່ ສາມາດລະບຸໄດ້ ລວມໄປເຖິງຄຳຂະຫຍາຍຄວາມປະເພດຂໍ້ມູນທີ່ຮູ້ໂດຍລະອຽດ

## ທະບຽນຄວບຄຸມເອກະສານ

| ລຳດັບ | ລາຍລະອຽດການດຳເນີນການ | ໜ່ວຍງານ ຮັບຜິດຊອບ | ວັນທີຈັດຕັ້ງ ປະຕິບັດ |
|---|---|---|---|
| 00 | ຈັດສ້າງເອກະສານ ແລະ ຂໍອະນຸມັດປະກາດໃຊ້ | Legal & Government | 03/03/2026 |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |
| | | | |